# ຢາປ້ອງກັນໂຣກເປັ້ຍຫລ່ອຍຊະນິດຢອດເຂົ້າທາງປາກ

## ສິ່ງ ທີ່ ທ່ານ ຕ້ອງ ຮູ້

## 1 ໂຣກເປັ້ຍຫລ່ອຍ Polio ແມ່ນຫຍັງ ?

**ໂຣກເປັ້ຍຫລ່ອຍເກີດຈາກເຊື້ອວາຍຣາສ໌.** ມັນເຂົ້າໄປຫາຮ່າງກາຍຂອງ ເດັກ (ຫຼື ຜູ້ໃຫ່ຍ) ໂດຍຜ່ານທາງປາກ. ບາງຄັ້ງມັນກໍຈະບໍ່ພາໃຫ້ເກີດ ເຈັບປ່ວຍທີ່ອັນຕຣາຍໃດທີ່ໜັກໜາຫຍັງ. ແຕ່ບາງຄັ້ງມັນອາດທຳໃຫ້ ເກີດເປັນເປັ້ຍຫລ່ອຍ (ບໍ່ສາມາດທີ່ຈະໜີງຕີງແຂນ ຫຼືຂາ). ໂຣກນີ້ສາມາດທຳໃຫ້ຜູ້ປ່ວຍຕາຍ ເພາະວ່າມັນເຮັດໃຫ້ລະບົບກ້າມເນື້ອທີ່ເປັນປະໂຫຍດໃນສ່ວນຫາຍໃຈໝົດແຮງແລະຫລ່ອຍລົງ.

ໂຣກເປັ້ຍຫລ່ອຍເຄີຍເປັນໂຣກຊະນິດນຶ່ງທີ່ແຜ່ຊຳເຮື້ອຢູ່ໃນສຫາຣັຖ. ມັນທຳໃຫ້ຄົນເປັນເປັ້ຍຫລ່ອຍແລະເສັຍຊີວິດເປັນຈຳນວນຫຼາຍພັນຄົນຕໍ່ ປີ ກ່ອນທີ່ຄົນເຮົາຈະຜລິດຢາວັກຊີນເພື່ອມາໃຊ້ປ້ອງກັນຕ້ານກັບໂຣກນີ້.

## 2 ເປັນຫຍັງຈຶ່ງໃຊ້ຢາວັກຊີນປ້ອງກັນໂຣກເປັ້ຍຫລ່ອຍນີ້

**ຢາວັກຊີນຕ້ານໂຣກເປັ້ຍຫລ່ອຍ** Polio Vaccine **ຈະປ້ອງກັນຄົນເຮົາຈາກການຕິດໂຣກນີ້.**

**ປະຫັວດ:** ໃນປີ 1916 ທ່າພຍາດເປັ້ຍຫລ່ອຍຣະບາດຢູ່ ສຫາຣັຖ ອາເມຣິກາ ໄດ້ດັບຊີວິດຄົນ 6,000 ແລະຄົນປ່ວຍໃຫ້ເກີດເປັນເປັ້ຍ ຫຼາຍກວ່າ 27,000 ຄົນ. ໃນຕອນຕົ້ນປີ 1950 ມີຄົນຫຼາຍກວ່າ 20,000 ລາຍເປັນເປັ້ຍຫລ່**ອຍນີ້. ຢາວັກຊີນກັນໂຣກເປັ້ຍຫລ່ອຍເລີ້ມໃຊ້ໃນປີ 1955.** ໃນປີ 1960 ເຫັນວ່າຈຳນວນຄົນທີ່ເປັນໂຣກເປັ້ຍຫລ່ອຍນີ້ລຸດລົງຣະຫວ່າງ 3,000 ແລະໃນປີ 1979 ມີພຽງ 10 ລາຍ ເທົ່ານັ້ນ. ຜົນສຳເຣັດຂອງການໃຊ້ຢາວັກຊີນກັນໂຣກເປັ້ຍຫລ່ອຍ ໃນສຫາຣັຖ ໄດ້ກາຍເປັນຮາກເຫງົ້າຂອງຄວາມຕັ້ງໃຈພຍາຍາມທີ່ຈະກຳຈັດພຍາດນີ້ໃນທົ່ວໂລກໃຫ້ໝົດໄປ.

**ໃນປະຈຸບັນ:** 20 ກວ່າປີຜ່ານມາແລ້ວໃນສຫາຣັຖ ບໍ່ເຫັນມີປະກົດການເຣື່ອງໂຣກເປັ້ຍຫລ່ອຍລະບາດ. ແຕ່ວ່າໂຣກນີ້ກໍຍັງຄົງມີຢູ່ແລະລະບາດສເມີມາຢູ່ໃນບາງປະເທດ. ຄົນປ່ວຍທີ່ເປັນໂຣກນີ້ພຽງຜູ້ດຽວຈາກທີ່ອື່ນກໍອາດສາມາດແຜ່ລະບາດພຍາດນີ້ຄືນໄດ້ອີກ. ຖ້າເຮົາບໍ່ໃຊ້ຢາວັກຊີນ ປ້ອງກັນໄວ້. ຖ້າວ່າຄວາມພຍາຍາມກຳຈັດພຍາດນີ້ຈາກໂລກເຮົາໄດ້ ຜົນສຳເຣັດ, ວັນນັ້ນພວກເຮົາຈະບໍ່ເປັນຫວ່ງນຳການໃຊ້ຢາວັກ ຊີນ ປ້ອງກັນ. ກວ່າຈະເຖິງວັນນັ້ນພວກເຮົາກໍຍັງຕ້ອງໄດ້ສືບຕໍ່ໃຫ້ລູກ ຂອງພວກເຮົາໃຊ້ຢາວັກຊີນເພື່ອປ້ອງກັນໄວ້ກ່ອນ.

## 3 ຢາວັກຊີນກັນໂຣກເປັ້ຍຫລ່ອຍມີຢູ່ສອງຊະນິດ

**ຢາວັກຊີນກັນໂຣກເປັ້ຍຫລ່ອຍມີສອງຊະນິດດວ້ຍກັນຄື:**

ຢາ ໄອພີວີ [(IPV) (Inactivated Polio Vaccine)]: **ຢາວັກຊີນ ປຸງຈາກເຊື້ອໂພລີໂອ ແລ້ວ: ເປັນຊະນິດທີ່ໃຊ້ສັກ**

ໄອພີວີ: **(IPV) ແມ່ນຢາວັກຊີນ ທີ່ສຫງວນໃຫ້ໃຊ້ປ້ອງກັນ ໂຣກເປັ້ຍ ຫລ່ອຍໃຫ້ເກືອບໝົດທຸກຄົນທີ່ຢູ່ໃນສຫາຣັຖ.**

ໂອພີວີ **(0PV)** ແມ່ນຢາວັກຊີນຕ້ານເຊື້ອໂພລີໂອ ຊະນິດຢອດເຂົ້າ ທາງປາກ): ເປັນຢາຢອດ, ຢອດເຂົ້າທາງປາກ. ຈົນເຖິງລະຍະນີ້, ຢາໂພລີໂອນີ້ ແມ່ນເພິ່ນສຫງວນສຳຣັບໃຊ້ກັບເດັກໃນສຫາຣັຖ. ຕໍ່ມາເພິ່ນກໍບໍ່ໄດ້ແນະນຳໃຫ້ໃຊ້ອີກອີກເລີຍ *ນອກຈາກວ່າ ໃນກໍຣະນີ ພິເສດ.* ຢາວັກຊີນໂອພີວີ ໄດ້ກຳຈັດໂຣກເປັ້ຍຫລ່ອຍນີ້ ໄດ້ຜົນດີທີ່ສຸດ ໃນສຫາຣັຖ ແລະເພິ່ນຍັງໃຊ້ຢານີ້ຢູ່ໃນອີກຫຼາຍປະເທດ.

ຢາວັກຊີນທັງສອງຊະນິດນີ້ມີຄຸນະພາບເພື່ອສ້າງຮ່າງກາຍໃຫ້ມີພູມຕ້ານ ທານຕໍ່ເຊື້ອພຍາດ ເປື້ອຍຫລ່ອຍ, ແຕ່ວ່າຢາໂອພີວີ (OPV) ມີແນວດີລື່ນ ເພາະວ່າມັນມີຄວາມພິເສດຄືສາມາດ ກຳຈັດແລະຄວບຄຸມເຊື້ອໂຣກ ບໍ່ໃຫ້ລະບາດແຜ່ໄປໃສ່ຜູ້ອື່ນໄດ້.

ເຖິງຢ່າງໃດກໍຕາມ, ສຳຣັບຄົນຈຳນວນນຶ່ງ (ປະມານ ນຶ່ງໃນ 2.4 ລ້ານ ຄົນທີ່ເປັນເປັ້ຍຫລ່ອຍນັ້ນກໍເນື່ອງມາຈາກຕິດເຊື້ອຢາ. ໂອກາດສ່ຽງທີ່ ຈະຕິດໂຣກຈາກເຊື້ອຢານັ້ນມີນ້ອຍທີ່ສຸດ, ຜູ້ຊ່ຽວຊານແຈ້ງວ່າໃຊ້ຢາ ວັກຊີນກັນໂຣກເປັ້ຍຫລ່ອຍຊະນິດຢອດເຂົ້າທາງປາກນັ້ນຈະມີໂອກາດ ນ້ອຍທີ່ສຸດທີ່ຈະເກີດເປັນເປັ້ຍຫລ່ອຍຍ້ອນເຊື້ອຢາເອງ. ***ຢາວັກຊີນກັນ*** *ໂຣກເປັ້ຍຫລ່ອຍຊະນິດສັກໄອພີວີ (IPV) ທີ່ໃຊ້ກັນໃນປະຈຸບັນນີ້ ຈະບໍ່ ທຳໃຫ້ເປັນເປັ້ຍຫລ່ອຍ.*

## 4 ໃຜຄວນຈະໃຊ້ຢາວັກຊີນ ໂອພີວີ ກັນໂຣກເປັ້ຍຫລ່ອຍຊະນິດ ຢອດເຂົ້າ ທາງປາກ ?

ຢາກັນໂຣກຊະນິດທີ່ຢອດເຂົ້າທາງປາກ OPV ເພິ່ນເຊົາໃຫ້ໃຊ້ກັນ ແລ້ວໃນສຫະຣັຖ ເພິ່ນສົມຄວນໃຫ້ໃຊ້ໃນບາງສພາບການເທົ່ານັ້ນຄື:

(1). ຂບວນເຜີຍແຜ່ຊັກຊວນປວງຊົນໃຫ້ປຸກຄວາມທົນທານໃຫ້ຮ່າງກາຍຕົນເພື່ອຣະວັງໂຣກເປັ້ຍຫລ່ອຍທີ່ພວມຣະບາດ.

(2). ເດັກຜູ້ບໍ່ເຄີຍສັກຢາກັນໂຣກເປັ້ຍຫລ່ອຍມາກ່ອນແລະ ຈະເດີນ ທາງໃນ 4 ອາທິດໄປປະເທດບ່ອນທີ່ໂຣກເປັ້ຍຫລ່ອຍລະບາດຢູ່. ເດັກເຫຼົ່ານີ້ອາດຈະໄດ້ຮັບຢາວັກຊີນ ໂອພີວີ OPV ເປັນຂນານທຳອິດ.

(3). ເດັກທີ່ພໍ່ແມ່ບໍ່ເຫັນດີໃຫ້ສັກຄົບຕາມຈຳນວນທີ່ບົ່ງບອກໄວ້. ເດັກເຫຼົ່ານີ້ຕ້ອງໄດ້ຮັບຢາວັກຊີນ ໄອພີວີ ຊະນິດສຳຣັບ ສອງຊຸດ ໃນບັ້ນຕົ້ນຂອງຊຸດສັກຢາປ້ອງກັນ ກ່ອນທີ່ຈະໃຊ້ຢາປ້ອງກັນຊະນິດ ຢອດເຂົ້າທາງປາກ ເປັນຊຸດທີສາມຫຼືສີ່ ຫຼືທັງສອງຊຸດ.

(4). ບຸກຄົນໃດທີ່ເປັນໂຣກແພ້ຢາຕ່າງໆທີ່ຮ້າຍແຮງເຊັ່ນແພ້ຢາຕ້ານ ເຊື້ອ, ຢານີໂອມັຍຊີນ, ຢາສເຕັບໂຕມັຍຊີນ, ຫຼືຢາໂປລີໂອໄມຊີນ ບີ, ຫຼືບຸກຄົນໃດທີ່ແພ້ຕໍ່ຢາສັກປ້ອງກັນໂຣກເປັ້ຍຫລ່ອຍໄອພີວີ ມາແລ້ວ ບຸກຄົນເຫຼົ່ານີ້ ຄວນຈະໃຊ້ຢາປ້ອງກັນໂຣກເປັ້ຍຫລ່ອຍຊະນິດຢອດ ເຂົ້າທາງປາກໂອພີວີ ແທນ.

ຖ້າທ່ານ ຫຼື ລູກຂອງທ່ານ ຢູ່ໃນນຶ່ງໃນສີ່ຈຳພວກທີ່ກ່າວມາຢູ່ຂ້າງເທິງ ນີ້, ຈົ່ງຖາມທ່ານໝໍຂອງທ່ານວ່າເມື່ອໃດຄວນຈະໃຫ້ເຂົາກິນຫຼືສັກຢາ ປ້ອງກັນນີ້. **ຈົ່ງຖາມໃຫ້ຮູ້ພັຍແຫ່ງການເປັນພຍາດເປັ້ຍຫລ່ອຍເນື່ອງ ຈາກເຊື້ອຢາປ້ອງກັນກ່ອນທີ່ທ່ານຈະຮັບຢາວັກຊີນ ຊະນິດຢອດ ເຂົ້າທາງປາກ ໂອພີວີ.**

ຢາວັກຊີນ ປ້ອງກັນໂຣກເປັ້ຍຫລ່ອຍແນວຢອດເຂົ້າປາກ ໂອພີວີ ເພິ່ນໃຫ້ໃຊ້ພ້ອມກັນກັບຢາວັກຊີນປ້ອງກັນໂຣກຊະນິດອື່ນກໍໄດ້.

## 5 ຜູ້ທີ່ມີບັນຫາທາງດ້ານສຸຂພາບ ບໍ່ຄວນໃຊ້ຢາວັກຊີນ ໂອພີວີຊະນິດຢອດເຂົ້າທາງປາກ ຄວນລໍຖ້າ ຫຼືເລື່ອນໄປກ່ອນ.

**ຜູ້ທີ່ບໍ່ຄວນຮັບຢາວັກຊີນກັນ ໂອພີວີປ້ອງກັນໂຣກເປ້ຍຫລ່ອຍ ຊະນິດ ຢອດເຂົ້າທາງປາກ:**

- ຜູ້ທີ່ໃຊ້ຢາສເຕີຣອຍ ລະຍະຍາວນານ, ຫຼື ຢາອື່ນໆທີ່ສົ່ງຜົນ ສະທ້ອນ ຕໍ່ລະບົບຕ້ານທານຂອງຮ່າງກາຍ
- ຜູ້ທີ່ເປັນໂຣກມະເລັງ ຫຼື ພວມກຳລັງໃຊ້ຢາເຄມີປິ່ວໂຣກມະເລັງ.
- ຜູ້ທີ່ເປັນໂຣກເອດສ໌ ຫຼື ຕິດເຊື້ອໂຣກເອດສ໌ (AIDS) ຫຼື ມີເຊື້ອໂຣກອື່ນໆ (HIV) ມີຜົນສະທ້ອນ ຕໍ່ລະບົບຕ້ານທາງຂອງຮ່າງກາຍ.
- ຖ້າຜູ້ໃດຜູ້ນຶ່ງຫາກມີບັນຫາຄ້າຍຄືຂອງຄົນສາມກຸ່ມທີ່ກ່າວມາ ຂ້າງເທິງນີ້ ຈະເປັນຜູ້ກຳກັບປ່ຽນຜ້າອ້ອມ ຫຼື ບົວຣະບັດໃກ້ຊິດ ເດັກທີ່ໄດ້ຮັບວັກຊີນກັນໂຣກເປ້ຍຫລ່ອຍ, ຢາວັກຊີກັນໂຣກນັ້ນ ບໍ່ໃຫ້ແມ່ນຊະນິດຢອດເຂົ້າທາງປາກ ໂອພີວີ.
- ເດັກກໍບໍ່ຄວນໄປໃຊ້ຢາວັກຊີນກັນໂຣກຊະນິດຢອດເຂົ້າທາງປາກ ຖ້າວ່າມີຜູ້ທີ່ມາຮັກສາເບິ່ງແຍງເດັກເຊັ່ນເປັນຜູ້ປ່ຽນຜ້າອ້ອມບໍ່ເຄີຍ ໄດ້ສັກຢາກັນໂຣກເປ້ຍຫລ່ອຍຊະນິດໃດເລີຍ.
- ຜູ້ໃດທີ່ເກີດອາການແພ້ຢາວັກຊີນປ້ອງກັນໂຣກເປ້ຍຫລ່ອຍຊະນິດ ຢອດເຂົ້າທາງປາກໃນຜ່ານມາ. ບໍ່ຄວນຈະໃຫ້ໃຊ້ອີກຕໍ່ໄປ.

**ຜູ້ທີ່ຄວນຈະເລື່ອນລໍຖ້າໄປກ່ອນ:**

- ຜູ້ໃດທີ່ເກີດປ່ວຍໃຂ້ຊໍ່າກາງ ຫຼືໜັກ ຢ່າງແຮງ ໃນເວລາຄຽວກັນທີ່ຈະໃຫ້ຮັບຢາກັນໂຣກນີ້ ຄວນໂຈະໄວ້ກ່ອນຈົນກະທັ່ງເຊົາເປັນ ປົກກະຕິແລ້ວ ຈຶ່ງໃຊ້ຢາວັກຊີນປ້ອງກັນໂຣກເປ້ຍຫລ່ອຍ ຊະນິດ ຢອດເຂົ້າທາງປາກ. ຜູ້ທີ່ເປັນໃຂ້ເລັກນ້ອຍເຊັ່ນ ເປັນໃຂ້ຫວັດ ນັ້ນ ເພິ່ນ***ກໍໃສ່***ຢານີ້ໃຫ້ໄດ້.

ຈົ່ງປຶກສານຳທ່ານໝໍຂອງທ່ານ ຖ້າຢາກຮູ້ຂໍ້ມູນເພີ້ມເຕີມ.

## 6 ພັຍອັນຕະຣາຍເນື່ອງຈາກການໃຊ້ຢາວັກຊີນປ້ອງກັນໂຣກ ເປ້ຍຫລ່ອຍຊະນິດຢອດເຂົ້າທາງປາກ ໂອພີວີມີຫຍັງແດ່ ?

ຢາວັກຊີນກັນໂຣກເປ້ຍຫລ່ອຍຊະນິດຢອດເຂົ້າທາງປາກນີ້ອາດສາມາດ, ທຳໃຫ້ຄົນເປັນເປ້ຍຫລ່ອຍໄດ້. ໃນແຕ່ລະປີມັນໄດ້ເປັນສາຍເຫດໃຫ້ຄົນເປັນເປ້ຍຫລ່ອຍຈຳນວນນຶ່ງ (ປະມານ 1 ຣາຍໃນ 2.4 ລ້ານຄົນ ທີ່ໃຊ້ຢາວັກຊີນທີ່ເປັນເປ້ຍຫລ່ອຍ) ນັບຕັ້ງແຕ່ປີທີ່ໃຊ້ຢານີ້ມາ. ເຊື້ອຢາ ວັກຊີນກັນໂຣກເປ້ຍຫລ່ອຍຊະນິດຢອດເຂົ້າທາງປາກສາມາດກໍ່ພຍາດ ເປ້ຍຫລ່ອຍໃນຮ່າງກາຍຄົນໄດ້ຊຶ່ງແມ່ນຜູ້ທີ່ໄດ້ກິນຢາວັກຊີນຫຼື ໃຫ້ແກ່ ຜູ້ທີ່ໃກ້ຊິດບົວຣະບັດຜູ້ຕິດເຊື້ອເຫຼົ່ານີ້. ໃນປະຈຸບັນນີ້ ໂຣກເປ້ຍຫລ່ອຍໄດ້ ຖືກແຈ້ງການໃຫ້ຊາບຈາກການຄວບຄຸມ ຂອງນັກວິຊາການຂອງສຫາຣັຖວ່າ ການສັກຢາວັກຊີນກັນໂຣກເປ້ຍຫລ່ອຍຈະປ້ອງເດັກ ແລະຜູ້ໃຫ່ຍໄດ້ດີສເມີກັນ ໂດຍປາສະຈາກການສ່ຽງພັຍ.

ຢາວັກຊີນກໍເໝືອນກັບຢາປະເພດອື່ນໆ, ສາມາດກໍ່ໃຫ້ເກີດບັນຫາໜັກຕ່າງໆໃຫ້ແກ່ຜູ້ກ່ຽວໄດ້. ເຊັ່ນອາການແພ້ອັນກັນຄານ. *ໂອກາດທີ່ ຢາປ້ອງກັນໂຣກເປ້ຍຫລ່ອຍຊະນິດຢອດເຂົ້າທາງປາກ ທີ່ຈະບັງເກີດອັນຕະຣາຍໃຫ້ແກ່ສຸຂພາບ, ຂັ້ນໜັກຫຼືເສັຍຊີວິດ ນັ້ນແມ່ນມີເປີເຊັນນ້ອຍທີ່ສຸດ.*

## 7 ປະຕິກິຣິຍາທີ່ຮ້າຍແຮງທີ່ຈະເກີດຂື້ນມີຫຍັງແດ່ ?

**ຂ້າພະເຈົ້າຈະຊອມເບິ່ງຫຍັງແດ່ທີ່ອາດຈະເກີດຂື້ນ?**

ຈົ່ງຊອມເບິ່ງອາການທີ່ຜິດປົກກະຕິເກີດຂື້ນ, ເຊັ່ນອາການແພ້ທີ່ ຮ້າຍແຮງ, ໃຂ້ຂື້ນສູງ, ການປະພຶດຕົນຜິດສັງເກດ.

ຖ້າຫາກມີການແພ້ຕ່າງໆເກີດຂື້ນ, ມັນຈະປາກົດຂື້ນພາຍໃນສອງສາມນາທີຫາສອງສາມຊົ່ວໂມງຫຼັງຈາກໃຊ້ຢາແລ້ວ. ອາການຕ່າງໆ ຂອງການແພ້ກໍມີຄື ຫາຍໃຈຝືດ, ຮູ້ສຶກອອ່ນເພັຍ, ຄໍແຫບ ຫຼື ຫາຍໃຈຫອບແຫດ, ຫົວໃຈເຕັ້ນໄວ, ເປັນວິນ, ຜື່ນຄັນໃດ່, ອອກຕຸ່ມມື່ນ ມ່ານຫຼືຮ່າງກາຍເປັນສີມ້ານເຂົ້າ.

ຖ້າແມ່ນວ່າອາການເປ້ຍຫລ່ອຍຈະເກີດຂື້ນນັ້ນ, ມັນຈະປາກົດຂື້ນພາຍ ໃນນຶ່ງອາທິດຫາ ນຶ່ງເດືອນຫຼັງຈາກການໃສ່ຢາ ວັກຊີນກັນໂຣກນີ້.
ອາການຕ່າງໆນັ້ນອາດຈະລວມມີດັ່ງຕໍ່ໄປນີ້

- ເຈັບກ້າມເນື້ອແຮງແລະປັ້ນກ້ອນຂື້ນ
- ອອ່ນເພັຍ
- ເຄື່ອນຍ້າຍຂາຫຼືແຂນບໍ່ໄດ້

**ຂ້າພະເຈົ້າຄວນຈະເຮັດຫຍັງແດ່?**

- ໂທຣສັບຫາທ່ານຫໝໍ ຂອງທ່ານ ຫຼື ນຳເອົາຄົນນັ້ນໄປຫາທ່ານໝໍ ທັນທີ.
- ບອກເຣື່ອງທີ່ເກີດຂື້ນສູ່ທ່ານໝໍຟັງ. ວັນເວລາ ທີ່ເກີດເຫດ, ວັນເວລາທີ່ສັກຢາເຂົ້າ.
- ຈົ່ງຖາມທ່ານໝໍຂອງທ່ານ, ນາງພຍາບານ, ກະຊວງ ສາທາຣະນະສຸກໃຫ້ຮູ້ວິທີການບັນທຶກໄວ້ໃນຟອມແລະການ ຣາຍງານເຣື່ອງເຫດເກີດຂື້ນຍ້ອນຢາວັກຊີນເຫຼົ່ານີ້ [Vaccine Adverse Event Reporting System (VAERS)] ຫຼື ໂທຣສັບຟຣີໄປຫາເພິ່ນດ້ວຍທ່ານເອງທີ່ **1-800-822-7967.**

ການຣາຍງານເຣື່ອງປະຕິກິຣິຍາທີ່ເກີດຂື້ນຈະຊ່ວຍໃຫ້ຜູ້ຊ່ຽວຊານໄດ້ຊອກຮູ້ບັນຫາຕ່າງໆກ່ຽວກັບຢານັ້ນ.

## 8 ໂຄງການແຫ່ງຊາດເພື່ອທົດແທນຄ່າເສັຍຫາຍໃຫ້ແກ່ຜູ້ທີ່ ໄດ້ ຮັບເຄາະເນື່ອງຈາກການຢາວັກຊີນກັນໂຣກ.

ໃນກໍຣະນີທີ່ທ່ານຫຼືລູກຂອງທ່ານໄດ້ຮັບພັຍອັນຕະຣາຍທີ່ເກີດຈາກການ ໃສ່ຢາວັກຊີນ ທາງຣັຖບານໄດ້ຈັດຕັ້ງໂຄງການຊ່ວຍເຫຼືອໄວ້ແລ້ວ ເພື່ອຈ່າຍຄ່າປິ່ນປົວໃຫ້ຜູ້ທີ່ໄດ້ຮັບເຄາະຮ້າຍ.

ສຳຮັບຣາຍລະອຽດເພີ້ມເຕີມກ່ຽວກັບໂຄງການແຫ່ງຊາດເພື່ອທົດແທນຄ່າເສັຍຫາຍໃຫ້ຜູ້ເຄາະເນື່ອງຈາກການໃສ່ຢາວັກຊີນ {National Vaccine Injury Compensation Program} ໂທຣຫາ **1-800-338-2382** ຫຼື ຈະຕິດຕໍ່ເຂົ້າໄປເບິ່ງທາງ ອິນເທີເນັດ **http://www.hrsa.gov/bhpr/vicp**

## 9 ເຮັດວິທີໃດຂ້າພະເຈົ້າຈະໄດ້ຮຽນຮູ້ເພີ້ມກ່ຽວກັບເຣື່ອງໂຣກນີ້

- ສອບຖາມເຣື່ອງນຳທ່ານໝໍຫຼືນາງພຍາບານ. ເພິ່ນຈະເອົາເອກກະ ສານເຣື່ອງການໃຊ້ຢາວັກຊີນເພື່ອໃຫ້ທ່ານໄປອ່ານຫຼື ຈະແນະນຳ ທ່ານໄປຊອກຄົ້ນຫາເອົາຢູ່ທີ່ສູນເຜີນແຜ່ຂ່າວຂໍ້ມູນອື່ນໆ.
- ໂທຣສັບໄປຖາມພແນກສາທາຣະນະສຸກທ້ອງຖິ່ນຫຼືກະຊວງ ສາທາຣະນະສຸກຂອງຣັຖທ່ານ ກ່ຽວກັບການໃຊ້ຢາວັກຊີນ.
- ຕິດຕໍ່ສູນກາງຄວບຄຸມແລະປ້ອງກັນພຍາດ (CDC).
  - ໂທຣ **1-800-232-2522** (ພາສາອັງກິດ)
  - ຈະເບິ່ງໃນ ອິນເທີເນັດ **http://www.cdc.gov/nip**

**U.S. DEPARTMENT OF HEALTH & HUMAN SERVICES**
Centers for Disease Control and Prevention
National Immunization Program

Vaccine Information Statement
Polio - OPV Supplement (1/1/2000) 42 U.S.C. § 300aa-26

Laotian

Translated for the Minnesota Department of Health